# Global Environment Facility Small Grants Programme, Lao PDR

## Community Action for Global Impact
## Call for Proposals
## 2009-2010

SGP-Lao country programme now has a total of $570,000 in 2009 (?) to allocate in the form of grants to Communities, Community-based Organizations, Not-for-Profit Associations and Mass Organizations

## GEF SGP

The Global Environment Facility Small Grants Programme (GEF SGP) is a global programme that was launched in 1992. GEF SGP is rooted in the belief that global environmental problems can best be addressed if local people are involved and direct community benefits and ownership are generated.

There are now 101 participating countries in GEF SGP in five world regions: Africa, Asia/Pacific, Arab States, Europe and Latin America/Caribbean. GEF SGP has funded more than 11,000 projects worldwide for GEF-SGP grants covering 104 countries across Africa, Asia, Europe, Latin America, and the Middle East.

### Objective

The principal objectives of SGP Lao PDR are to:

- Develop community-level strategies and implement technologies that reduce threats to the global environment and support the achievement of the MDGs.
- Gather lessons from community-level experiences and facilitate the sharing and integration of successes and innovations amongst multiple stakeholders in order to raise public awareness on environmental matters as well as promote public participation in environmental management.
- Build partnerships and networks of stakeholders to support and strengthen community, community based organization (CBO) / non-for-profit association (NPA) and national capacities to address global environmental problems and promote sustainable development.
- Strengthen capacities at multiple levels (community, CBO/NPA) to develop and implement conservation and sustainable development strategies and activities that protect the global environment.

The SGP will also contribute to the development of policy and legal frameworks for national environmental management

## Areas of Focus

### Biodiversity Conservation

- Promote the use of traditional knowledge and good practice of local communities with respect to the management and utilization of biodiversity resources, for instance: inventories, selection and library of seeds, agricultural and handcraft production (including development of local technologies);
- Support communities' biodiversity strategies and plans:
  - Support the development of community-based natural resource management and conservation in areas of global significance for biodiversity, protected areas and buffer zones and important wetlands.
  - Promote responsible ecotourism as a way to maintain biological diversity and important natural features, as well as to restore degraded ecosystems or habitats.
  - Manage and control market linkages for biodiversity based products and services for sustainable livelihood development of the marginalized communities.
  - Conserve and promote the conservation of agro-biodiversity by local communities within the broader agricultural landscape.
  - Develop and support environmental education within local communities and within formal and non-formal education systems.
- Promote studies of the potential and strength of biodiversity to support community socio-economic development and eco-tourism as livelihood alternatives, plus replication of successes.

### Climate Change

- Improve the resilience of the natural forest to climate change through the development and promotion of improved land use and non-timber forest product (NTFP) management techniques.
- Improve the resilience of the agriculture sector in Lao PDR to climate change impacts through the development and promotion of improved agricultural farming techniques.
- Promote alternative renewable sources of energy (e.g. micro-hydro) through community driven projects.
- Support the development of renewable energy in rural and isolated areas that are unlikely to access the national grid in the near future. Such activities include solar and micro-hydro.
- Identify and implement low cost user friendly technologies and strategies to reduce levels of pollution from the use of agro-chemicals and land use change.

### International Water

- Support sustainable, community based water and water resource management in order that groundwater resources are not over-extracted.
- Promote the use of technology that has minor impacts on water and water resources to protect the unsustainable exploitation of fisheries and protection of fisheries habitats.
- Support projects concerning indigenous knowledge on water and water resource management especially, ethnic groups. Sharing of the results will contribute to national water and water resource policy development processes.

### Land Degradation

- Generate lessons learned that feed into the development of policy, strategy, laws and regulations, with a particular focus on the implementation of land allocation program.
- Support the participatory, community-based restoration of degraded areas of land.
- Promote and improve the use of traditional knowledge on the management and utilization of land in accordance with specific local conditions, sharing the knowledge generated regionally and nationally.
- Promote the application of local and sustainable technologie

### Persistent Organic Pollutant (POP)

- Promote organic production and marketing of organic produce.
- Undertake environment assessment on the impacts of development projects and operations on agricultural land.
- Develop and promote the use of clean technology and clean products, organic products or chemical free products, goods and services that conform to high environmental quality standards.

### Eligibility Criteria

To achieve SGP mandate in:

- providing for more grassroots experiences,
- building capacities, local ownership and awareness on benefits of a healthy environment
- enhance capacities to develop and manage resources effectively for sustainable development and the greater good

SGP will provide small grants to Lao CBOs, NPAs, and Mass Organizations in order to implement projects under the focal areas of GEF and country environment priorities.

## Submission and Review

Applicants can submit a project concept note and /or a project proposal in written and printed document or as an electronic form in Lao language and /or English. If an applicant has difficulty writing concept notes or proposals, the organization can consult with NC about arranging alternative mechanisms for submission (e.g. video proposal) and or the possibility of applying for a planning grant (normally $2,000 and not more than $5,000): A planning grant can be used by the applicants to organize workshops or meetings to design the project in a participatory manner. It can also be used to contract an experienced NPAs, CBOs, academic institution, INGO or consultant to work with the applicant to elaborate the project, to undertake baseline assessments, etc.

Following the deadline for receipt of project concept notes and proposals, the National Coordinator (NC) and the National Steering Committee (NSC) will prescreen all project concept notes and project proposals within a 30 day period. If necessary, the NC may ask questions about the project and visit the project site.

The NC will provide feedback on all project concept notes and proposals received and feedback will be one of the following categories:

1) Entitled to Receive Grant from SGP,
2) Recommendation to change, or
3) Rejected.

The applicants under "Reject" category will not need to proceed in the application for a grant. Applicants under "Recommendation to change" are going to work directly with NC and NSC to ensure the relevant of the project documents and achieve required technical assistance during the improvement and re-submit to NC within a 30 day period. Following resubmission, the documents will be reconsidered and a response will be provided by the NC within a 30 days.

The applicants under "Entitled to Receive Grant from SGP" they will take further step for development of Project proposal


**Contact for submission Project Concept Note/Proposal:**
Mr. Phetdavone CHALEUNSOUK, National Coordinator
Lane Xang Avenue, P.O. Box: 345.
Tel: 856 21 267777 ext 658; Mobile: 856 20 630 5044,
Email: phet.chaleunsouk@undp.org
URL: http://www.undplao.org/whatwedo/small%20grants.php


# ແຜນງານໂຄງການຂະໜາດນ້ອຍ ກອງທຶນສິ່ງແວດລ້ອມໂລກ, ສປປ ລາວ

GEF

U N
D P



SGP The GEF Small Grants Programme

# ແຜນງານໂຄງການຂະໜາດນ້ອຍ ກອງທຶນສິ່ງແວດລ້ອມໂລກ ສປປ ລາວ

## ເຊີນຍື່ນບົດສະເໜີຂອງທຶນຊ່ວຍເຫຼືອລ້າ 2009-2010

ປະຈຸບັນ ແຜນງານໂຄງການຂະໜາດນ້ອຍ ສປປ ລາວ ມີທຶນຈຳນວນ 570,000 ໂດລາສະຫະລັດ ເພື່ອໃຫ້ເປັນທຶນຊ່ວຍເຫຼືອລ້າ ສຳລັບຊຸມຊົນ, ອົງການຈັດຕັ້ງຂອງຊຸມຊົນ, ສະມາຄົມບໍ່ຫວັງຜົນກຳໄລ (ລວມທັງສະມາຄົມທີ່ກຳລັງສະເໜີ ຂໍສ້າງຕັ້ງ), ອົງການຈັດຕັ້ງມະຫາຊົນ ແລະ ສະຖາບັນການສຶກສາ

## ແຜນງານໂຄງການຂະໜາດນ້ອຍ ກອງທຶນສິ່ງແວດລ້ອມໂລກ

ແຜນງານໂຄງການຂະໜາດນ້ອຍຂອງກອງທຶນສິ່ງແວດລ້ອມໂລກ ແມ່ນໂຄງການຮ່ວມມືລະດັບສາກົນ ມີອົງການສະຫະປະຊາຊາດເພື່ອການພັດທະນາ ແລະ ບັນດາອົງການທີ່ດຳເນີນວຽກງານດ້ານສິ່ງແວດລ້ອມ ເປັນຕົວແທນຈັດຕັ້ງປະຕິບັດ ໃນລະດັບປະເທດ ໂດຍການມອບໝາຍຂອງອົງການສະຫະປະຊາຊາດເພື່ອການບໍລິການໂຄງການ (UNOPS).

ແຜນງານໂຄງການຂະໜາດນ້ອຍຈັດຕັ້ງປະຕິບັດມາແຕ່ປີ 1992, ໃນບັນດາປະເທດທີ່ເຂົ້າຮ່ວມດຳເນີນແຜນງານໂຄງການຂະໜາດນ້ອຍ ທີ່ຢູ່ໃນ ອາຟຣິກາ, ເອເຊຍ/ປາຊີຟິກ, ອາຣັບ, ເອີຣົບ ແລະ ອາເມລິກາລາຕິນ /ກາຣິບຽນມີ 101 ປະເທດ ໃຫ້ສັດຕະຍະບັນ ກ່ຽວກັບສົນທິສັນຍາ ວ່າດ້ວຍ ຊີວະນາໆພັນ ແລະ ຕໍ່ຕ້ານການປ່ຽນແປງດິນຟ້າອາກາດ.

ມາຮອດປະຈຸບັນ, ແຜນງານໂຄງການຂະໜາດນ້ອຍ ອະນຸມັດທຶນຊ່ວຍເຫຼືອລ້າແລ້ວຫຼາຍກວ່າ 11,000 ໂຄງການ ໃນ 104 ປະເທດທົ່ວໂລກ, ທຸກໂຄງການໄດ້ຖືກຈັດຕັ້ງປະຕິບັດ ແລະ ໄດ້ບັນລຸຕາມຈຸດປະສົງ ຂອງກອງທຶນສິ່ງແວດລ້ອມໂລກ ໃນການຫຼຸດຜ່ອນຄວາມທຸກຍາກ, ສ້າງຄວາມເຂັ້ມແຂງດ້ານການບໍລິຫານ, ຄຸ້ມຄອງສິ່ງແວດລ້ອມ ແລະ ຍັງໄດ້ເອົາໃຈໃສ່ເປັນພິເສດ ຕໍ່ບັນດາຊົນເຜົ່າ ແລະ ບົດບາດຍິງ-ຊາຍ. ແຜນງານໂຄງການຂະໜາດນ້ອຍ ເອົາໃຈໃສ່ສະໜັບສະໜູນເປົ້າໝາຍການພັດທະນາແບບຍືນຍົງ ແລະ ເປັນອົງປະກອບສຳຄັນໃນການບັນລຸເປົ້າໝາຍພັດທະນາສະຫະສະວັດ.

### ຈຸດປະສົງ

- ພັດທະນາ ຊຸມຊົນ ແລະ ຖ່າຍທອດເຕັກໂນໂລຊີ ທີ່ເປັນມິດກັບສິ່ງແວດລ້ອມໃນທ້ອງຖິ່ນ ເພື່ອເປັນການປະກອບສ່ວນ ໃຫ້ສິ່ງແວດລ້ອມຂອງໂລກ ແລະ ທັງເປັນການສະໜັບສະໜູນ ການບັນລຸເປົ້າໝາຍພັດທະນາສະຫະສະວັດ.
- ຖອດຖອນບົດຮຽນຈາກຊຸມຊົນ, ສົ່ງເສີມຄວາມຮູ້ພື້ນບ້ານ, ສົ່ງເສີມການມີສ່ວນຮ່ວມຂອງສັງຄົມ ໃນການປົກປັກຮັກສາ ແລະ ຄຸ້ມຄອງສິ່ງແວດລ້ອມ.
- ສ້າງຄວາມເຂັ້ມແຂງດ້ານການປະສານງານ, ເຄືອຄ່າຍກັບອົງການຈັດຕັ້ງຕ່າງໆ ໃນລະດັບສູນກາງ ແລະ ທ້ອງຖິ່ນ. ພ້ອມກັນນັ້ນ, ກໍ່ສ້າງຊຸມຊົນ/ອົງການຈັດຕັ້ງຂອງຊຸມຊົນ, ສະມາຄົມບໍ່ຫວັງຜົນກຳໄລ ໃຫ້ມີຄວາມເຂັ້ມແຂງໃນການຄຸ້ມຄອງສິ່ງແວດລ້ອມຂອງປະເທດ, ພາກພື້ນ ກໍ່ຄືຂອງໂລກ ເພື່ອຕອບສະໜອງການພັດທະນາ ແລະ ການອະນຸລັກສິ່ງແວດລ້ອມແບບຍືນຍົງ.
- ສ້າງຄວາມສາມາດໃຫ້ ຊຸມຊົນ/ອົງການຈັດຕັ້ງຊຸມຊົນ, ສະມາຄົມບໍ່ຫວັງຜົນກຳໄລ ແລະ ພາກລັດ ເພື່ອພັດທະນາ ແລະ ຈັດຕັ້ງປະຕິບັດຍຸດທະສາດ, ແຜນງານ, ໂຄງການ ກ່ຽວກັບການອະນຸລັກທຳມະຊາດ ທີ່ຕິດພັນກັບການພັດທະນາແບບຍືນຍົງ ແລະ ບັນດາກິດຈະກຳທີ່ປົກປັກຮັກສາສິ່ງແວດລ້ອມຂອງໂລກ.
- ສະໜັບສະໜູນລັດຖະບານ ເພື່ອພັດທະນາ ແລະ ປັບປຸງເຄື່ອງມື ກ່ຽວກັບການປົກປັກຮັກສາສິ່ງແວດລ້ອມ. ທັງໝົດນີ້ ກໍ່ເພື່ອເປັນການປະກອບສ່ວນໃຫ້ແກ່ການພັດທະນານະໂຍບາຍ ແລະ ບັນດານິຕິກຳ ກ່ຽວກັບວຽກງານຄຸ້ມຄອງສິ່ງແວດລ້ອມ ແລະ ອະນຸລັກຊັບພະ ຍາກອນທຳມະຊາດ.

## ຂົງເຂດວຽກບູລິມະສິດໃນການໃຫ້ທຶນ

### ຊີວະນາໆພັນ

- ສົ່ງເສີມ ຄວາມຮູ້ຂອງຊາວບ້ານ ແລະ ມູນເຊື້ອຂອງບັນດາເຜົ່າ ໃນການຄຸ້ມຄອງ ແລະ ນຳໃຊ້ແຫຼ່ງຊີວະນາໆພັນ ເຊັ່ນ: ການສຳຫຼວດ ແລະ ການຂຶ້ນບັນຊີຕຳລາຢາພື້ນເມືອງ, ຄວາມຮູ້ກ່ຽວກັບການຄັດເລືອກ ແລະ ຮັກສາແນວພັນ ເພື່ອຮັບໃຊ້ການຜະລິດກະສິກຳ ແລະ ຫັດຖະກຳໃຫ້ກ້າວມາເປັນເຕັກໂນໂລຊີທ້ອງຖິ່ນ;
- ສະໜັບສະໜູນການຈັດຕັ້ງປະຕິບັດຍຸດທະສາດ ແລະ ແຜນດຳເນີນງານ ກ່ຽວກັບການຄຸ້ມຄອງຊີວະນາໆຂອງຊຸມຊົນ:
  - ການຄຸ້ມຄອງແຫຼ່ງທຳມະຊາດ ແລະ ເຂດສະຫງວນຕ່າງໆ ຮ່ວມກັນລະຫວ່າງຊຸມຊົນ
  - ສົ່ງເສີມການທ່ອງທ່ຽວແບບທຳມະຊາດ
  - ສະໜັບສະໜູນການເຊື່ອມໂຍງກັບຕະຫຼາດຂອງຜະລິດຕະພັນຊີວະນາໆພັນ ແລະ ການບໍລິການ ເພື່ອພັດທະນາຊີວິດການເປັນຢູ່ຂອງຊຸມຊົນແບບຍືນຍົງ ໂດຍສະເພາະແມ່ນປະຊາຊົນທີ່ຢູ່ອ້ອມບໍລິເວນປ່າສະຫງວນ;
- ສົ່ງເສີມການຄົ້ນຄວ້າທ່າແຮງຂອງຜະລິດຕະພັນຊີວະນາໆພັນ ຕໍ່ການພັດທະນາເສດຖະກິດ-ສັງຄົມ ຂອງຊຸມຊົນເພື່ອສົ່ງເສີມໃຫ້ເປັນສິນຄ້າທາງເລືອກ ແລະ ເຜີຍແຜ່ອອກສູ່ຊຸມຊົນອື່ນ ກໍ່ຄືສັງຄົມຢ່າງກ້ວາງຂວາງໃຫ້

### ການປ່ຽນແປງດິນຟ້າອາກາດ

- ສະໜັບສະໜູນການສ້າງຄວາມເຂັ້ມແຂງ ໃຫ້ກັບຂະແໜງກະສິກຳ ໃນການປັບຕົວ ທີ່ເກີດຈາກຜົນກະທົບຂອງການປ່ຽນແປງດິນຟ້າອາກາດ ໂດຍຜ່ານການພັດທະນາ ແລະ ການສົ່ງເສີມການນຳໃຊ້ເຕັກນິກກະສິກຳທີ່ເປັນມິດກັບສິ່ງແວດລ້ອມ.
- ສົ່ງເສີມການນຳໃຊ້ແຫຼ່ງຊັບພະຍາກອນທີ່ເປັນທາງເລືອກໃໝ່ ດ້ານພະລັງງານ (ຕົວຢ່າງ: ພະລັງໄຟຟ້ານ້ຳຕົກຂະໜາດນ້ອຍ) ໂດຍຜ່ານໂຄງການທີ່ປະຊາຊົນເປັນເຈົ້າການ.
- ສະໜັບສະໜູນການນຳໃຊ້ເຕັກໂນໂລຊີ ທີ່ເປັນມິດກັບສິ່ງແວດລ້ອມ ແລະ ມີມູນຄ່າຕ່ຳ
- ສະໜັບສະໜູນການສ້າງຍຸດທະສາດ ເພື່ອຫຼຸດຜ່ອນລະດັບມົນລະພິດຈາກການໃຊ້ເຄມີໃນຂະແໜງກະສິກຳ ແລະ ການປ່ຽນແປງດິນ.

### ສາຍນ້ຳສາກົນ:

- ສະໜັບສະໜູນການຄຸ້ມຄອງນ້ຳ, ຊັບພະຍາກອນນ້ຳ ແລະ ແຫຼ່ງຕົ້ນນ້ຳຂອງຊຸມຊົນແບບຍືນຍົງ;
- ສົ່ງເສີມການນຳໃຊ້ເຕັກໂນໂລຊີ ທີ່ມີຜົນກະທົບໜ້ອຍທີ່ສຸດຕໍ່ນ້ຳ ແລະ ແຫຼ່ງນ້ຳ
- ສະໜັບສະໜູນໂຄງການຄົ້ນຄວ້າຄວາມຮູ້ພື້ນບ້ານຂອງບັນດາເຜົ່າ ຫຼື ຕຳລາຊາວບ້ານໃນການຄຸ້ມຄອງນ້ຳ ແລະນຳໃຊ້ນ້ຳ
- ສະໜັບສະໜູນການຈັດຕັ້ງປະຕິບັດຍຸດທະສາດ ແລະ ແຜນດຳເນີນງານ ກ່ຽວກັບນ້ຳ ແລະ ຊັບພະຍາກອນແຫຼ່ງນ້ຳ
- ສະໜັບສະໜູນການການຄຸ້ມຄອງ ແລະ ນຳໃຊ້ນ້ຳແບບປະສົມປະສານ

### ການເຊື່ອມໂຊມຂອງດິນ

- ສົ່ງເສີມການວາງແຜນຄຸ້ມຄອງ-ນຳໃຊ້ທີ່ດິນ ຈາກໂຄງການມອບດິນມອບປ່າ ສະໜັບສະໜູນການກຳນົດເຂດປ່າສະຫງວນ
- ສົ່ງເສີມການນຳໃຊ້ເຕັກໂນໂລຊີ ທີ່ມີຜົນກະທົບໜ້ອຍທີ່ສຸດຕໍ່ຄຸນນະພາບຂອງດິນໃນການຜະລິດກະສິກຳ
- ສະໜັບສະໜູນໂຄງການຄົ້ນຄວ້າຄວາມຮູ້ພື້ນບ້ານຂອງບັນດາເຜົ່າ ຫຼື ຕຳລາຊາວບ້ານໃນການຄຸ້ມຄອງດິນ ແລະ ນຳໃຊ້ທີ່ດິນ ເພື່ອໃຫ້ກ້າວມາເປັນເຕັກໂນໂລຊີທ້ອງຖິ່ນ ເພື່ອເປັນການປະກອບສ່ວນ ໃຫ້ການພັດທະນາເສດຖະກິດ-ສັງຄົມ. ອັນນີ້ ກໍ່ເພື່ອເປັນການດຶງດູດ ແລະ ຍາດແຍ່ງການຊ່ວຍເຫຼືອ ຈາກອົງການຈັດຕັ້ງຕ່າງໆ ທັງພາຍໃນແລະຕ່າງປະເທດ ເພື່ອຈັດຕັ້ງປະຕິບັດໂຄງການໃຫ້ສຳເລັດ. ແຕ່ໃນນີ້ ແຜນງານໂຄງການຂະໜາດນ້ອຍຈະເອົາໃຈໃສ່ເປັນພິເສດ ສຳລັບການມີສ່ວນຮ່ວມຂອງຂະແໜງການຕ່າງໆທີ່ພົວພັນເຖິງການຄຸ້ມຄອງທີ່ດິນ, ການເຂົ້າຮ່ວມຂອງທຸກຊັ້ນຄົນໃນທຸກລະດັບເປັນຕົ້ນແມ່ນແມ່ຍິງ.

### ສານພິດຕົກຄ້າງ

- ສະໜັບສະໜູນການຫຼຸດຜ່ອນ, ຈຳກັດ ແລະ ຈຳໜ່າຍ ສານເຄມີອັນຕະລາຍເພື່ອນຳໃຊ້ເຂົ້າໃນການຜະ ລິດກະສິກຳ ໂດຍສົ່ງເສີມ ແລະ ເຊື່ອມໂຍງຜະລິດຕະພັນປອດສານເຄມີ ກັບຕະຫຼາດ.
- ພັດທະນາ ແລະ ສົ່ງເສີມການນຳໃຊ້ເຕັກໂນໂລຊີ ທີ່ເປັນມິດກັບສິ່ງແວດລ້ອມ
- ດຳເນີນການສຶກສາປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ທີ່ໄດ້ຮັບຜົນກະທົບຈາກບັນດາໂຄງການ ພັດທະນາ ແລະ ປະຕິບັດວຽກງານດ້ານທີ່ດິນກະສິກຳ.

### ມາດຖານຜູ້ຂໍທຶນ

ເພື່ອເຮັດໃຫ້ແຜນງານໂຄງການຂະໜາດນ້ອຍ ຂອງກອງທຶນສິ່ງແວດລ້ອມໂລກ, ສປປ ລາວ ເຮັດສຳເລັດພາລະບົດບາດ ແລະ ໜ້າທີ່ ໃນການ

- ເສີມຂະຫຍາຍປະສົບການແລະສ້າງຄວາມເປັນເຈົ້າການໃຫ້ທ້ອງຖິ່ນ,
- ສ້າງຄວາມສາມາດ ແລະ ຄວາມເຂົ້າໃຈກ່ຽວກັບຜົນປະໂຫຍດຂອງສິ່ງແວດລ້ອມໃຫ້ກັບຊຸມຊົນ;
- ສ້າງຄວາມເຂົ້າໃຈກ່ຽວກັບການພັດທະນາແບບຍືນຍົງ; ແລະ ເຮັດໃຫ້ຊຸມຊົນສາມາດຄຸ້ມຄອງຊັບພະຍາກອນທຳມະຊາດ ຢ່າງມີປະສິດທິພາບ

ແຜນງານໂຄງການຂະໜາດນ້ອຍ ຈະສະໜັບສະໜູນຊຸມຊົນ, ອົງການຈັດຕັ້ງຂອງຊຸມຊົນ (CBOs), ສະມາຄົມບໍ່ຫວັງຜົນກຳໄລ(NPAs), ອົງການຈັດຕັ້ງມະຫາຊົນ (MOs) ແລະ ສະຖາບັນການສຶກສາ ເພື່ອດຳເນີນໂຄງການຂະໜາດນ້ອຍ ໃນຂົງເຂດວຽກງານບູລິມະສິດ.

## ການສົ່ງບົດສະເໜີແນວຄວາມຄິດກ່ຽວກັບໂຄງການ/ບົດສະເໜີໂຄງການ

ຜູ້ສະເໜີຂໍທຶນສາມາດສົ່ງບົດສະເໜີແນວຄວາມຄິດກ່ຽວກັບໂຄງການ ຫຼື ບົດສະເໜີໂຄງການ ທີ່ເປັນເອກະສານອີເລັກໂຫຼນິກ ເປັນພາສາລາວ ຫຼື ພາສາອັງກິດກໍ່ໄດ້. ຖ້າຜູ້ສະເໜີຂໍທຶນ ມີຄວາມຫຍຸ້ງຍາກໃນການຂຽນເປັນເອກະສານ ກໍ່ສາມາດປຶກສາກັບຜູ້ປະສານງານລະດັບຊາດ ເພື່ອຊອກຫາວິທີອື່ນໆ ເຊັ່ນ ອາດເຮັດເປັນບົດສະເໜີແບບວີດີໂອ, ຮູບພາບ ຫຼື ອາດສະເໜີຂໍເງິນສະໜັບສະໜູນການວາງແຜນໂຄງການ (2,000–5,000 ໂດລາສະຫະລັດ): ສາມາດນຳໃຊ້ເຂົ້າໃນການຈັດກອງປະຊຸມປຶກສາຫາລື ໃນການວາງແຜນໂຄງການເພື່ອສົ່ງເສີມການມີສ່ວນຮ່ວມຂອງພາກສ່ວນກ່ຽວຂ້ອງ ໂດຍສະເພາະແມ່ນຜູ້ທີ່ໄດ້ຮັບຜົນກະທົບຈາກໂຄງການ ເຊັ່ນ: ເຈົ້າໜ້າທີ່ລັດ ແລະ ປະຊາຊົນທີ່ດຳລົງຊີວິດ ຢູ່ໃກ້ເຂດປ່າສະຫງວນຕ່າງໆ, ລວມທັງການສ້າງຂໍ້ມູນພື້ນ ຖານກ່ຽວກັບສະພາບຂອງສິ່ງແວດລ້ອມໃນພື້ນທີ່ດຳເນີນໂຄງການ. ນອກຈາກນັ້ນ, ກໍ່ຍັງສາມາດນຳໃຊ້ເປັນຄ່າວ່າຈ້າງສະມາຄົມບໍ່ຫວັງຜົນກຳໄລ, ອົງການຈັດຕັ້ງຂອງຊຸມຊົນ ແລະ ອົງການຈັດຕັ້ງມະຫາຊົນທີ່ມີປະສົບການ ທີ່ຢູ່ໃນທ້ອງຖິ່ນ ມາຊ່ວຍຂຽນເອກະສານໂຄງການ, ປະເມີນສະພາບຊົນນະບົດແບບມີສ່ວນຮ່ວມ ເພື່ອສ້າງຖານຂໍ້ມູນ ແລະ ອື່ນໆ.

ຜູ້ຂໍທຶນທີ່ມີເງື່ອນໄຂ ສົ່ງບົດສະເໜີແນວຄວາມຄິດກ່ຽວກັບໂຄງການ ເຖິງຜູ້ປະສານງານລະດັບຊາດ ແລະ ຄະນະກຳມະການຊີ້ນຳແຫ່ງຊາດ ເພື່ອທົບທວນ, ຊຶ່ງຈະໃຊ້ເວລາ 30 ວັນ. ຫຼັງຈາກນັ້ນ, ຜູ້ປະສານງານແຫ່ງຊາດ ຈະແຈ້ງຜົນການທົບທວນໃຫ້ຊາບຕາມມາດຖານລຸ່ມນີ້:

1). ມີສິດຮັບທຶນຊ່ວຍເຫຼືອລ້າ;

2). ແນະນຳໃຫ້ໄປດັດແກ້;

3). ບໍ່ມີສິດໄດ້ຮັບທຶນຊ່ວຍເຫຼືອລ້າ.

ຜູ້ຂໍທຶນໄດ້ຮັບແຈ້ງວ່າ "ມີສິດຮັບທຶນຊ່ວຍເຫຼືອລ້າ" ຫຼື "ແນະນຳໃຫ້ໄປດັດແກ້" ຜູ້ປະສານງານລະດັບຊາດ ແລະ ຄະນະກຳມະການຊີ້ນຳແຫ່ງຊາດ ກໍ່ຈະສືບຕໍ່ເຮັດວຽກກັບຜູ້ຂໍທຶນຢ່າງໃກ້ສິດ ເພື່ອຮັບປະກັນຄຸນນະ ພາບຂອງໂຄງການ ແລະ ການສະໜັບສະໜູນດ້ານວິຊາການ. ຖ້າຜູ້ຂໍທຶນບໍ່ສາມາດ ຂຽນບົດສະເໜີໂຄງການດ້ວຍຕົນເອງ ກໍ່ສາມາດສະເໜີຂໍເງິນສະໜັບສະໜູນການວາງແຜນໂຄງການ ເພື່ອໄປສ້າງບົດສະເໜີໂຄງການ ຫຼື ເອົາວິຊາການມາຊ່ວຍ.

**ບ່ອນສົ່ງເອກະສານຂໍທຶນ ແລະ ພົວພັນເພີ່ມເຕີມ:**
ທ່ານ ເພັດດາວອນ ຈະເລີນສຸກ. ຜູ້ປະສານງານລະດັບຊາດ,
ຖະໜົນລ້ານຊ້າງ, ຕູ້ ປ.ນ 345, ນະຄອນຫຼວງວຽງຈັນ ສປປ ລາວ.
ໂທ: +856 (0) 21 267777 ຕໍ່ 658, ມືຖື: +856 (0) 20 6305044,
Email: phet.chaleunsouk@undp.org,
URL: http://www.undplao.org/whatwedo/small%20grants.php